# ວັດປ່າລາວວູດແລນດ໌

**ສູນຍ໌ປະຕິບັຕທັມມ໌ ແລະເຜີຍແຜ່ທັມມະ**

WPLW 38702 NW Pacific Hwy; Woodland, WA 98674
P. O. Box 822155 Vancouver, WA 98682 **Phone:** 360-225-1675
**Website:** www.watpalao.org **Email:** watpalao@frontier.com


ວັນທີ ໑໕ ສິງຫາ, ໒໐໑໕

## ເຊີນຮ່ວມບູຊາທີ່ດິນ ໃຫ້ເປັນທໍຣະນີສົງຄ໌

ຂໍຈະເຣີນພອນ ນາຍົງຍາຕໂຍມຜູ່ມີໃຈເປັນກຸສົລທີ່ນັບຖື ແລະຮັກແພງ,

ຄນະອາຕມາພຣະອາຈາຣຍ໌ ທົງຣິທ ຈັນທະສາໂຣ ແລະພຣະອາຈາຣຍ໌ ສີທົນ ໄຊຍະວົງສອນ ຕາງໜ້າຄນະພຣະສົງຄ໌ໃນວັດປ່າລາວວູດແລນດ໌ ຣັຖວໍຊິງຕັນ ພ້ອມດ້ວຍປະທານ ແລະຄນະກັມມະການບໍຣິຫາຣທຸກໆພແນກຂອງວັດປ່າລາວວູດແລນດ໌ ( ວປລວ ) ຂໍແຈ້ງຄວາມຈຳເປັນທີ່ພວກເຮົາມີ ໃຫ້ບັນດາທ່ານໄດ້ຊາບວ່າ: ທາງວັດໄດ້ກູ້ຢືມເງິນຈາກບໍຣິສັທເອກຊົນ ຊຶ່ງມີຂໍ້ດອກສູງກວ່າທາງທະນາຄາຣເປັນເທົ່າຕົວ ເນື່ອງຈາກວ່າເປັນວັດຫາກໍ່ສ້າງໃໝ່ ຍັງບໍ່ທັນມີຣາຍໄດ້ພໍທີ່ຈະໃຫ້ທາງທະນາຄາຣມອບເງິນເປັນກ້ອນໃຫ້ໄດ້, ເພາະການຊື້ວັດນີ້ແມ່ນໃນນາມຂອງວັດປ່າລາວວູດແລນດ໌ໂດຍຕຣົງ ບໍ່ແມ່ນຊື້ໃນນາມສ່ວນບຸຄຄົລຕາມທີ່ຫລາຍບ່ອນເຄີຍປະຕິບັຕຜ່ານມາ. ດັ່ງນັ້ນ ເພື່ອຕອບສນອງຄວາມຮຽກຮ້ອງຕ້ອງການຂອງຊາວພຸທ ຊຶ່ງຍາມໃດກໍ່ຢາກໃຫ້ມີວັດ ມາໄວ້ເປັນບ່ອນປະຕິບັຕທັມມ໌ ແລະທຳກິຈກັມມ໌ທາງສາສນາ ນຳພາລູກຫລານສືບສານຮີຕຄອງປະເພນີ ຈຶ່ງໄດ້ພາກັນຕັດສິນໃຈ ແລະຕົກລົງຊື້ໂບສຖ໌ເກົ່າຂອງສາສນາຄຣິສຕຽນທີ່ມີເນື້ອທີ່ ໑໖.໔ ເອເກີ໌ ຕົກເປັນເງິນຢູ່ $໓໔໕,໐໐໐. ( ສາມແສນສີ່ສິບຫ້າພັນ ) ພ້ອມຄ່າໃຊ້ຈ່າຍອື່ນໆ ເພີ່ມອີກເກືອບສີ່ໝື່ນກວ່າ ລວມແລ້ວຕົກເປັນ $໓໙໕,໐໐໐. ມາເປັນວັດປ່າລາວຢູ່ປັຈຈຸບັນ.

ແຕ່ມື້ເຣີ່ມຍ້າຍເຂົ້າໄປຢູ່ ເມື່ອທ້າຍເດືອນ ມິຖຸນາ ປີ ໒໐໑໕ ເປັນຕົ້ນມາທາງວັດໄດ້ມີແຜນ ໃຫ້ການບໍຣິການແກ່ຊາວພຸທສືບຕໍ່ໄປ ບໍ່ວ່າຈະເປັນດ້ານການເຜີຍແຜ່ສາສນາ ສຶກສາທັມມະ, ຝຶກອົບຮົມດ້ານວິປັສນາ, ສິລປະວັທນະທັມ, ພາສາສາຕຣ໌, ໂຄງການພັທນາຜູ່ສູງອາຍຸ ພ້ອມທັງເຍົາວະຊົນ ໄປພ້ອມໆກັນ. ນອກຈາກນີ້, ຍັງຈະເປັນວັດລາວແຫ່ງທຳອິດ ໃນພາຄຕາເວັນຕົກສ່ຽງເໜືອຂອງສຫະຣັຖ ທີ່ມີການອົບຮົມວິປັສນາກັມມະຖານ ແລະຝຶກສັມມາທິໄວ້ບໍຣິການ. ແຕ່ເນື່ອງຈາກວ່າ ທາງວັດມີກຳນົດການຢືມເງິນພຽງ ໒ ປີຕ້ອງຈ່າຍຄືນ ພ້ອມດຽວກັນ, ຍັງຈະມີການປຸກສ້າງທີ່ພັກໃຫ້ແກ່ພຣະພິກຂຸສົງຄ໌ ປົວແປງ ແລະປັບປຸງພື້ນທີ່ໃຫ້ໃຊ້ງານໄດ້ຕາມຄວາມຕ້ອງການ ຄ່າໃຊ້ຈ່າຍໃນການລົງມືເທື່ອນີ້ຊຶ່ງຄາດວ່າຈະໃຊ້ງົບປະມານເຖິງ $໒໕໐,໐໐໐ ດອລລາຣ໌ ( ສອງຮ້ອຍຫ້າສິບພັນ ) ເພີ່ມຈາກຈຳນວນທີ່ຊື້ ຈຶ່ງຈະສຳເຣັຈຜົລຕາມທີ່ວາງໄວ້. ຫາກໂຄງການນີ້ເປັນໄປຕາມເປົ້າໝາຍ ການບູຊາທີ່ດິນໃຫ້ເປັນທໍຣະນີສົງຄ໌ໃນເນື້ອທີ່ ໗໘,໓໗໖. ຕອນຈະຕົກເປັນເງິນຢູ່ $໗໘໓,໗໖໐.໐໐ ດອລລາຣ໌.

ດັ່ງນັ້ນ, ທາງວັດປ່າລາວຈຶ່ງຂໍຄວາມເຫັນໃຈຈາກບັນດາທ່ານ ຜູ່ມີຈິຕໃສໃຈສັທທາຊ່ອຍບໍຣິຈາຄປັຈໄຈຍ໌ບູຊາທີ່ດິນມອບໃຫ້ເປັນທໍຣະນີສົງຄ໌ຕາມແຮງສັທທາ ຊ່ອຍແຜນການດັ່ງກ່າວນີ້ໃຫ້ໄດ້ຮັບຜົລສຳເຣັຈຕາມເປົ້າໝາຍ ເພື່ອໃຫ້ສະຖານທີ່ແຫ່ງນີ້ໄດ້ເປັນມໍຣະດົກ ໄວ້ໃຫ້ລູກຫລານໄດ້ສືບທອດກິຈກັມ ອັນເປັນຄວາມຝັນຂອງພວກເຮົາທຸກໆຄົນເມື່ອຍັງມີຊີວິຕຢູ່. ການບໍຣິຈາຄທັງໝົດ ທ່ານສາມາຖຫັກອອກຈາກພາສີຣາຍໄດ້ ຊຶ່ງຖືກຣະບຸໄວ້ໃນກົຕໝາຍ ກະຣຸນາ ຖາມຜູ່ເຣັດຣາຍງານພາສີ (Tax) ໃຫ້ທ່ານ ເພື່ອຣາຍຣະອຽດເພີ່ມເຕີມ. ຂໍຂອບໃຈລ່ວງໜ້າ ທີ່ທ່ານໃຫ້ຄວາມອຸປກາຣະ ອຸປະຖັມຄ້ຳຊູຕລອດມາ ແລະກະຣຸນາຂຽນແບບຟອມບໍຣິຈາຄ ທີ່ຄັດຕິດມາພ້ອມນີ້ ໂດຍການສົ່ງຈ່າຍໃສ່ຊື່ວ່າ **WPLW** ແລ້ວສົ່ງຄືນໄປທີ່ຕູ້ໄປສະນີຍ໌ ຕາມທີ່ບອກໄວ້ຢູ່ຂ້າງເທິງນີ້ດ້ວຍ.

***ດ້ວຍຄວາມຊາບຊຶ້ງ ແລະຮູ້ບຸນຍ໌ຄຸນ***

| ພຣະອາຈາຣຍ໌ ທົງຣິທ ຈັນທະສາໂຣ | ພຣະອາຈາຣຍ໌ ສີທົນ ໄຊຍະວົງສອນ | ໄຊຍະສິທ ສົມມາພິລາວົງສ໌ |
|---|---|---|
| ຫົວໜ້າຄນະສົງຄ໌ ວັດປ່າລາວວູດແລນດ໌ | ຕາງໜ້າຄນະສ້າງຕັ້ງວັດປ່າລາວວູດແລນດ໌ | ປະທານຄນະກັມມະການບໍຣິຫາຣ ວປລວ |